## ມິຊຊາອາທິດທີ 17 ກຳນົດທຳມະດາ ປີ B
## ວັນອາທິດທີ 29 ກໍລະກົດ 2018



**ພຣະວໍລະສານໂດຍນັກບຸນຢວງ 6, 1-15**

ໃນເວລານັ້ນ, ພຣະເຢຊູເຈົ້າສະເດັດຂ້າມທະເລກາລີເລອັນມີຊື່ວ່າທະເລຊາບຕິເບຣີອັດ. ຝູງຄົນຫລວງຫລາຍຕິດຕາມພຣະອົງໄປ ຍ້ອນວ່າໄດ້ເຫັນການອັດສະຈັນທີ່ພຣະອົງໄດ້ກະທຳເພື່ອປິ່ນປົວຄົນເຈັບປ່ວຍ. ພຣະອົງໄດ້ສະເດັດຂຶ້ນເທິງພູແລະປະທັບຢູ່ທີ່ນັ້ນພ້ອມກັບພວກລູກສິດຂອງພຣະອົງ. ເວລານັ້ນບຸນປາສກາອັນແມ່ນວັນສະຫລອງຂອງພວກຢູເດວກໍໃກ້ຈະມາເຖິງແລ້ວ. ພຣະເຢຊູເຈົ້າຊົງທອດພຣະເນດເຫັນປະຊາຊົນຫລວງຫລາຍມາຫາພຣະອົງດັ່ງນີ້ ຈຶ່ງກ່າວກັບຟີລິບວ່າ: ພວກເຮົາຈະຊື້ເຂົ້າຈີ່ຢູ່ໃສພໍໃຫ້ຄົນເຫລົ່ານີ້ໄດ້ກິນ? ພຣະອົງກ່າວດັ່ງນີ້ກໍເພື່ອລອງໃຈເພິ່ນ. ພຣະອົງເອງຮູ້ຈັກແລ້ວວ່າຈະຕ້ອງເຮັດແນວໃດ. ຟີລິບທູນຕອບວ່າ: ຊື້ເຂົ້າຈີ່ສອງຮ້ອຍຫລຽນກໍບໍ່ພໍເພື່ອແບ່ງໃຫ້ຜູ້ໜຶ່ງໄດ້ໜ້ອຍໜຶ່ງຊໍ້າ.

ສາວົກຜູ້ໜຶ່ງຊື່ອັນເດຣທີ່ເປັນນ້ອງຂອງຊີມອນເປໂຕທູນພຣະອົງວ່າ: ຢູ່ນີ້ມີເດັກນ້ອຍຜູ້ໜຶ່ງມີເຂົ້າຈີ່ຫ້າກ້ອນກັບປາສອງໂຕ ແຕ່ວ່າເທົ່ານີ້ຈະພໍຫຍັງສຳລັບຄົນຫລາຍປານນີ້?
ພຣະເຢຊູເຈົ້າເລີຍກ່າວວ່າ: ຈົ່ງບອກໃຫ້ພວກເຂົາເຈົ້ານັ່ງລົງ. ຢູ່ທີ່ນັ້ນມີຫຍ້າຫລາຍ. ພວກເຂົາໄດ້ພາກັນນັ່ງ, ນັບແຕ່ຜູ້ຊາຍມີປະມານຫ້າພັນຄົນ. ພຣະເຢຊູເຈົ້າຊົງຈັບເອົາເຂົ້າຈີ່, ຊົງຂອບພຣະຄຸນແລ້ວແຈກຢາຍໃຫ້ພວກທີ່ນັ່ງຢູ່ນັ້ນ. ສຳລັບປາພຣະອົງກໍກະທຳດັ່ງດຽວກັນ ຕາມຄວາມຕ້ອງການຂອງໃຜລາວ.

ເມື່ອທຸກຄົນໄດ້ກິນອີ່ມໜຳສຳລານແລ້ວ, ພຣະອົງກໍກ່າວກັບພວກລູກສິດວ່າ: ຈົ່ງເກັບເສດເຂົ້າຈີ່ທີ່ເຫລືອໄວ້ນັ້ນບໍ່ໃຫ້ມັນເສຍໄປຊື່ໆ. ພວກລູກສິດກໍໄດ້ພາກັນຮິບໂຮມເສດທີ່ເຫລືອຈາກເຂົ້າຈີ່ຫ້າກ້ອນໄວ້ໄດ້ສິບສອງກະຕ່າ. ຄົນທັງຫລາຍເຫັນອັດສະຈັນທີ່ພຣະເຢຊູເຈົ້າໄດ້ກະທຳເລີຍເວົ້າວ່າ: ທ່ານຜູ້ນີ້ແທ້ ແມ່ນປະພາສົກທີ່ຈະຕ້ອງມາໃນໂລກນີ້.

ເມື່ອພຣະເຢຊູເຈົ້າຮູ້ວ່າພວກເຂົາຈະຈັບເອົາພຣະອົງໄປແຕ່ງຕັ້ງເປັນກະສັດ ພຣະອົງເລີຍຜີກຕົວໜີຂຶ້ນພູແຕ່ຜູ້ດຽວອີກເທື່ອໜຶ່ງ.

ນີ້ແມ່ນວາຈາຂອງພຣະກຣິສໂຕເຈົ້າ

**ບົດແບ່ງປັນ: ຢວງ 6, 1-15**

ວາຈາຂອງພຣະເຈົ້າທີ່ພວກເຮົາຫາກໍໄດ້ຟັງ, ເລົ່າເຖິງເຫດການທີ່ພຣະເຢຊູເຈົ້າໄດ້ເຕົ້າໂຮມຝູງຊົນເປັນຈຳນວນຫລວງຫລາຍທີ່ຕິດຕາມພຣະອົງມາ. ຍ້ອນພວກເຂົາໄດ້ຟັງຄຳເທດສອນຂອງພຣະອົງແລະໄດ້ເຫັນກິດຈະການອັດສະຈັນຫລາຍຢ່າງທີ່ພຣະເຢຊູເຈົ້າຊົງກະທຳ. ແລະພິເສດໄປກວ່ານັ້ນ, ວັນນີ້ພຣະເຢຊູເຈົ້າປາດຖະໜາຢາກລ້ຽງເກືອຝູງຊົນທັງໝົດ. ສິ່ງທີ່ພວກເຮົາລ້ວນແຕ່ຮູ້ຈັກນັ້ນຄືພຣະອົງໄດ້ລ້ຽງຝູງຊົນເປັນຈຳນວນຫ້າພັນຄົນດ້ວຍເຂົ້າຈີ່ຫ້າກ້ອນແລະປາສອງໂຕ. ທ້າຍສຸດ, ຝູງຊົນກໍໄດ້ກິນອີ່ມໝຳສຳລານແລະຍັງເກັບເສດເຫລືອຈາກການກິນຄັ້ງນີ້ໄດ້ສິບສອງກະຕ່າ. ຖ້າພວກເຮົາພິດຈາລະນາແລະຄິດໄລ່ຕາມປະສາມະນຸດພວກເຮົາຈະເຫັນວ່າບໍ່ມີຄວາມສົມດູນລະຫວ່າງຕົວເລກຫ້າແລະຫ້າພັນ. ແລະກໍບໍ່ມີວິທີໃດທີ່ຈະເຮັດໃຫ້ຈຳນວນສອງຕົວເລກນີ້ເທົ່າສະເໝີກັນໄດ້. ແຕ່ໃນວັນນີ້, ພຣະເຢຊູເຈົ້າບໍ່ພຽງແຕ່ລ້ຽງເກືອຝູງຊົນຫ້າພັນຄົນດ້ວຍເຂົ້າຈີ່ຫ້າກ້ອນແລະປາສອງໂຕເທົ່ານັ້ນ, ແຕ່ພວກເຂົາຍັງເກັບສິ່ງທີ່ເສດເຫລືອຈາກການກິນຄັ້ງນີ້ໄດ້ເຕັມສິບສອງກະຕ່າ.

ສິ່ງທີ່ໜ້າຄິດໃນທີ່ນີ້ຄື ຖ້າພຣະເຢຊູເຈົ້າສາມາດກະທຳການອັດສະຈັນນີ້ໄດ້ ເປັນຫຍັງພຣະອົງບໍ່ລ້ຽງເກືອຝູງຊົນດ້ວຍອາຫານທີ່ຕົກລົງມາຈາກຟ້າເໝືອນດັ່ງປະຊາກອນອິສຣາແອນທີ່ຮັບກິນມານນາໃນທີ່ປ່ຽວ? ເປັນຫຍັງພຣະອົງຈຶ່ງຕ້ອງໃຊ້ເຂົ້າຈີ່ຫ້າກ້ອນແລະປາສອງໂຕ? ແນ່ນອນສຳລັບພຣະເຢຊູເຈົ້າທຸກສິ່ງເປັນໄປໄດ້. ແຕ່ພຣະອົງຢາກສອນພວກເຮົາໃຫ້ຮູ້ຈັກແບ່ງປັນໃນສິ່ງທີ່ພວກເຮົາມີເຖິງວ່າຈະບໍ່ຫລວງຫລາຍມາກມາຍກໍຕາມ, ແຕ່ຖ້າພວກເຮົາໃຫ້ດ້ວຍຄວາມຮັກພຣະເຈົ້າກໍຈະທຳໃຫ້ສິ່ງເລັກນ້ອຍທີ່ພວກເຮົາມີກາຍເປັນສິ່ງທີ່ໃຫຍ່ຫລວງແລະເຫລືອລົ້ນ. ເພາະບໍ່ມີຫຍັງທີ່ເປັນໄປບໍ່ໄດ້ສຳລັບພຣະເຈົ້າ.

ຮູບພາບທີ່ພຣະເຢຊູເຈົ້າລ້ຽງເກືອຝູງຊົນໃນວັນນີ້, ເປັນຮູບພາບຂອງມະຫາບູຊາມິຊຊາ. ທຸກຄັ້ງທີ່ພວກເຮົາມາຮ່ວມຖະຫວາຍມິຊຊາບູຊາ, ແມ່ນພຣະເຢຊູເຈົ້າເອງເປັນຜູ້ເຕົ້າໂຮມແລະລ້ຽງເກືອພວກເຮົາ. ພຣະອົງບໍ່ໄດ້ລ້ຽງເກືອພວກເຮົາດ້ວຍເຂົ້າຈີ່ຫ້າກ້ອນແລະປາສອງໂຕ, ແຕ່ພຣະອົງລ້ຽງເກືອພວກເຮົາດ້ວຍພຣະກາຍແລະພຣະໂລຫິດຂອງພຣະອົງ. ເພາະພຣະກາຍຂອງພຣະອົງເປັນອາຫານແທ້ ແລະໂລຫິດຂອງພຣະອົງເປັນເຄື່ອງດື່ມແທ້ທີ່ຈະປະທານຊີວິດນິລັນດອນໃຫ້ພວກເຮົາ.

ທຸກຄັ້ງທີ່ພວກເຮົາມາຮ່ວມມະຫາບູຊາມິຊຊາ, ພວກເຮົາມາຫາພຣະອົງດ້ວຍສະພາບຊີວິດທີ່ພວກເຮົາມີແລະພວກເຮົາເປັນ. ດ້ວຍຄວາມກັງວົນ, ຄວາມຍາກລຳບາກ ແຕ່ພຣະອົງຈະຫັນປ່ຽນສິ່ງທີ່ພວກເຮົາມີແລະພວກເຮົາເປັນໃຫ້ເປັນສິ່ງສວຍງາມແລະຊອບພຣະໄທພຣະອົງ. ເໝືອນດັ່ງພຣະອົງໄດ້ທະວີເຂົ້າຈີ່ຫ້າກ້ອນແລະປາສອງໂຕເພື່ອລ້ຽງເກືອຝູງຊົນຈຳນວນຫລວງຫລາຍ. ແຕ່ສິ່ງທີ່ພຣະເຢຊູເຈົ້າລໍຖ້ານຳພວກເຮົາຄືໃຫ້ພວກເຮົາເປີດໃຈແລະມອບຖະຫວາຍທຸກສິ່ງຢ່າງໃຫ້ກັບພຣະອົງ ເພື່ອພຣະຄຸນຂອງພຣະອົງຈະໄດ້ທຳງານໃນຕົວຂອງພວກເຮົາແຕ່ລະຄົນ.

ຂໍໃຫ້ວາຈາຂອງພຣະເຈົ້າໃນວັນນີ້ຊ່ວຍພວກເຮົາໃຫ້ຮູ້ຈັກເຊື່ອແລະໄວ້ວາງໃຈໃນພຣະເຢຊູເຈົ້າ, ເພາະບໍ່ມີຫຍັງທີ່ເປັນໄປບໍ່ໄດ້ສຳລັບພຣະອົງ. ອາແມນ

ຄຸນພໍ່ ອົງຕວນ ກຽດຕິສັກ